ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 174/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 16 ມີນາ 2022

# ຂໍ້ຕົກລົງ

## ວ່າດ້ວຍ ການແບ່ງຄວາມຮັບຜິດຊອບກ່ຽວກັບວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງບັນດາກົມພາຍໃນ ທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ)

- ອີງຕາມກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມດຳລັດວ່າດ້ວຍ ຄວາມຮັບຜິດຊອບໃນການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 127/ລບ, ລົງວັນທີ 20 ກຸມພາ 2020;
- ອີງຕາມໜັງສືສະເໜີຂອງ ສຳນັກງານຂໍ້ມູນຕ້ານການຟອກເງິນ ສະບັບເລກທີ 388/ສຕຟງ, ລົງວັນທີ 10 ມີນາ 2022.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດບົດບາດ ແລະ ແບ່ງຄວາມຮັບຜິດຊອບ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງບັນດາກົມ ພາຍໃນ ທະນາຄານແຫ່ງ ສປປ ລາວ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວ ມີຄວາມຄ່ອງຕົວ ແນໃສ່ການຄຸ້ມຄອງ, ການຕິດຕາມ ແລະ ການກວດກາ ໃຫ້ມີປະສິດທິຜົນ ແລະ ຍົບເຂົ້າໃກ້ມາດຕະຖານສາກົນ ເທື່ອລະກ້າວ.

### ມາດຕາ 2 ຄວາມຮັບຜິດຊອບ

ຄວາມຮັບຜິດຊອບກ່ຽວກັບວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງບັນດາກົມພາຍໃນ ທະນາຄານແຫ່ງ ສປປ ລາວ ຕາມຂໍ້ຕົກລົງສະບັບນີ້ ແມ່ນຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ 02 ໜ້າວຽກ ດັ່ງນີ້:

1. ການກວດສອບຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ກ່ອນ ແລະ ຫຼັງ ການອອກໃບອະນຸຍາດດຳເນີນທຸລະກິດ;
2. ການຄຸ້ມຄອງວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ການແບ່ງຄວາມຮັບຜິດຊອບກ່ຽວກັບວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງບັນດາກົມພາຍໃນ ທະນາຄານແຫ່ງ ສປປ ລາວ ແມ່ນການກຳນົດຄວາມຮັບຜິດຊອບຂອງກົມທີ່ກ່ຽວຂ້ອງ ຊຶ່ງຕ້ອງຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 4 ແລະ 5 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ ສຳລັບ ສຳນັກງານຂໍ້ມູນຕ້ານການຟອກເງິນ, ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງສະຖາບັນການເງິນ, ກົມນະໂຍບາຍເງິນຕາ ແລະ ກົມຄຸ້ມຄອງລະບົບການຊຳລະ ຊຶ່ງເປັນກົງຈັກຊ່ວຍວຽກຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 4 ກົມທີ່ຮັບຜິດຊອບການກວດສອບຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ກ່ອນ ແລະ ຫຼັງ ການອອກໃບອະນຸຍາດດຳເນີນທຸລະກິດ**

ມອບໃຫ້ ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງສະຖາບັນການເງິນ, ກົມນະໂຍບາຍເງິນຕາ ແລະ ກົມຄຸ້ມຄອງລະບົບການຊຳລະ ເປັນຜູ້ຮັບຜິດຊອບ ຄົ້ນຄວ້າອອກ ແລະ ຈັດຕັ້ງປະຕິບັດ ນິຕິກຳ, ບົດແນະນຳ ຫຼື ຄູ່ມືກ່ຽວກັບການຈັດຕັ້ງປະບັດວຽກງານການກວດສອບຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ຂອງບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງຂໍອະນຸຍາດດຳເນີນທຸລະກິດ ພາຍໃຕ້ຄວາມຮັບຜິດຊອບຂອງຕົນ ກ່ອນ ແລະ ຫຼັງ ການອອກໃບອະນຸຍາດດຳເນີນທຸລະກິດ.

**ມາດຕາ 5 ກົມທີ່ຮັບຜິດຊອບການຄຸ້ມຄອງວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ມອບໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ເປັນຜູ້ຮັບຜິດຊອບໃນການຄຸ້ມຄອງ, ດຳເນີນການຕິດຕາມ ແລະ ກວດກາ ລວມທັງອອກນິຕິກຳ, ຄຳແນະນຳ ຫຼື ບົດແນະນຳ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳລັບຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 6 ການຈັດຕັ້ງປະຕິບັດ**

ສຳນັກງານຂໍ້ມູນຕ້ານການຟອກເງິນ, ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງສະຖາບັນການເງິນ, ກົມນະໂຍບາຍເງິນຕາ ແລະ ກົມຄຸ້ມຄອງລະບົບການຊຳລະ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືລະຫວ່າງກັນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນ ຢ່າງຮອບດ້ານ ແລະ ມີປະສິດທິຜົນ.

**ມາດຕາ 7 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍ ການກຳນົດຜູ້ຄຸ້ມຄອງວຽກງານການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳລັບທະນາຄານທຸລະກິດ ແລະ ສະຖາບັນການເງິນ ສະບັບເລກທີ 416/ທຫລ, ລົງວັນທີ 05 ມິຖຸນາ 2015.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

**ສອນໄຊ ສິດພະໄຊ**